ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2109 /ກປ

ນະຄອນຫຼວງວຽງຈັນ, ວັນທີ 27 APR 2016

## ຄຳສັ່ງ

## ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການນຳໃຊ້ມາດຕະການສຸຂານາໄມພືດ ເພື່ອແກ້ໄຂຕໍ່ການແຈ້ງເຕືອນຂອງສະຫະພາບເອີຣົບ (EU)

ເຖິງ: - ທ່ານ ຫົວໜ້າກົມປູກຝັງ;

- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ທ່ານ ຫົວໜ້າດ່ານປ້ອງກັນພືດ.

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມໜັງສືສະເໜີຂອງກົມປູກຝັງ ເລກທີ 0769/ກປຝ, ລົງວັນທີ 18 ເມສາ 2016.

ໃນໄລຍະຜ່ານມາ, ສປປ ລາວ ໄດ້ສົ່ງອອກຜະລິດຕະພັນສິນຄ້າກະສິກຳ ໂດຍສະເພາະຜະລິດຕະພັນພືດໄປຍັງບັນດາປະເທດໃນພາກພື້ນ ແລະສາກົນ ນັບມື້ມີທ່າອ່ຽງເພີ່ມຂຶ້ນ, ອັນທີ່ພົ້ນເດັ່ນ ພວກເຮົາສາມາດເຈາະເຂົ້າຕະຫຼາດສະຫະພາບເອີຣົບ (EU) ໄດ້, ສ້າງລາຍຮັບຈຳນວນບໍ່ໜ້ອຍໃຫ້ແກ່ຜູ້ຜະລິດ ແລະຜູ້ປະກອບການ; ແຕ່ຕົກມາໃນທ້າຍປີ 2012 ມາຮອດປະຈຸບັນນີ້, ພວກເຮົາ ໄດ້ຖືກແຈ້ງເຕືອນກ່ຽວກັບບັນຫາສັດຕູພືດຕິດແປດຈາກສະຫະພາບເອີຣົບ (EU) ເຖິງ 130 ຄັ້ງ ແລະຮ້າຍແຮງໄປກວ່ານັ້ນ ໃນຕົ້ນປີນີ້ (2016) ມີ 4 ກຸ່ມພືດ ຄື: ກຸ່ມຜັກບົວລະພາ (Basil, *Ocimum* spp), ກຸ່ມຜັກຫອມເປ (Maxican coriander, *Eryngium* spp), ກຸ່ມໝາກເຜັດ (Peppers, *Capsicum* sp) ແລະກຸ່ມຜັກອີເລີດ (Chaphu, *Piper* spp) ຖືກສະຫະພາບເອີຣົບ (EU) ຫ້າມສົ່ງອອກ ແລະນຳເຂົ້າ ໄປຍັງສະຫະພາບເອີຣົບ (EU). ສາເຫດຕົ້ນຕໍ ກໍຍ້ອນວ່າ: ຜະລິດຕະພັນພືດຜັກ ຈາກ ສປປ ລາວ ທີ່ສົ່ງເຂົ້າບັນດາປະເທດເອີຣົບ ມີສັດຕູພືດຕິດແປດໄປນຳ ແລະມີສານພິດຕົກຄ້າງໃນພືດ ແລະຜະລິດຕະພັນພືດ ເກີນຄ່າມາດຕະຖານກຳນົດ.

ສະນັ້ນ, ຖ້າພວກເຮົາບໍ່ມີມາດຕະການແກ້ໄຂຕໍ່ການແຈ້ງເຕືອນດັ່ງກ່າວແລ້ວ ພວກເຮົາກໍຈະຖືກ ສະຫະພາບເອີຣົບ (EU) ນຳໃຊ້ມາດຕະການຫ້າມນຳເຂົ້າພືດ ແລະຜະລິດຕະພັນພືດຈາກ ສປປ ລາວ ຄືກັນກັບການຫ້າມ 4 ກຸ່ມພືດດັ່ງກ່າວເທິງນັ້ນ, ເຮັດໃຫ້ພາບພົດ ບົດບາດການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ລວມທັງລາຍຮັບຈາກການສົ່ງອອກຫຼຸດໜ້ອຍຖອຍລົງ. ເພື່ອແກ້ໄຂບັນຫາດັ່ງກ່າວ ໃຫ້ຕົກໄປຢ່າງຂາດຕົວນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບພາກສ່ວນ

ທີ່ກ່ຽວຂ້ອງ ປະຕິບັດເດັດຂາດ, ເຂັ້ມງວດບາງວຽກ ດັ່ງນີ້:

1.1. ຢຸດຕິການອອກ ໃບຢັ້ງຢືນສຸຂານາໄມພືດຊົ່ວຄາວໃຫ້ແກ່ບັນດາບໍລິສັດ ທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ (EU) ຈົນກວ່າຈະມີການປັບປຸງ ແລະສອດຄ່ອງກັບມາດຕະການສຸຂານາໄມພືດຂອງສະຫະພາບເອີຣົບ (ບັນດາບໍລິສັດ ທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ ໄດ້ຄັດຕິດມາພ້ອມນີ້);

1.2. ຊີ້ນຳພະນັກງານ ແລະເຈົ້າໜ້າທີ່ປ້ອງກັນພືດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ແລະພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ສະກັດກັ້ນ ແລະຫ້າມອອກໃບຢັ້ງຢືນສຸຂານາໄມພືດ ໃຫ້ພືດ ແລະຜະລິດຕະພັນພືດ ທີ່ແອບອ້າງ ຫຼືປອມແປງແຫຼ່ງກຳເນີດຈາກ ສປປ ລາວ ເພື່ອສົ່ງອອກທີ່ບໍ່ຖືກຕ້ອງຕາມກົດໝາຍວ່າດ້ວຍການປ້ອງກັນພືດ, ດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ແລະມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ສະບັບທີ 7 ແລະ 12 (ISPMs 7 ແລະ 12);

1.3. ສືບຕໍ່ຊີ້ນຳ ຂະແໜງປູກຝັງ ແລະຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ໃນການໂຄສະນາເຜີຍແຜ່ບັນດານິຕິກຳ ແລະເງື່ອນໄຂການນຳເຂົ້າພືດ ແລະຜະລິດຕະພັນພືດຂອງ ສະຫະພາບເອີຣົບ (EU) ໃຫ້ຜູ້ສົ່ງອອກພືດ ແລະຜະລິດຕະພັນພືດ ໄດ້ຮັບຮູ້, ເຂົ້າໃຈ ແລະສາມາດຈັດຕັ້ງໄດ້ຢ່າງຖືກຕ້ອງ.

**2.** ໃຫ້ ກົມປູກຝັງ ສືບຕໍ່ເປັນໃຈກາງປະສານສົມທົບກັບອົງການຈັດຕັ້ງສາກົນ ເພື່ອແກ້ໄຂບັນຫາດັ່ງກ່າວ ລວມທັງຊຸກຍູ້ ແນະນຳບັນດາບໍລິສັດທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ (EU) ໃຫ້ສາມາດສົ່ງອອກໄປຍັງ ສະຫະພາບເອີຣົບ (EU) ໄດ້ຢ່າງຖືກຕ້ອງ;

**3.** ໃຫ້ ກົມປູກຝັງ ລາຍງານຄວາມຄືບໜ້າໃນການແກ້ໄຂບັນຫາດັ່ງກ່າວ ໃຫ້ອົງການປ້ອງກັນພືດຂອງ ສະຫະພາບເອີຣົບ (EU), ພ້ອມທັງຜັນຂະຫຍາຍຄຳສັ່ງສະບັບນີ້ ອອກເປັນຄຳແນະນຳ ແລະປື້ມຄູ່ມືວິຊາການ ເປັນອັນລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

**4.** ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ກວດກາຄືນ ລະບົບການກວດກາ ແລະຢັ້ງຢືນສຸຂານາໄມພືດຂອງພະນັກງານ, ເຈົ້າໜ້າທີ່ປ້ອງກັນພືດ ແລະບໍລິສັດທີ່ສົ່ງອອກ ເພື່ອລາຍງານ ກະຊວງກະສິກຳ ແລະປ່າໄມ້ ຮັບຊາບພາຍໃນກາງເດືອນ ມິຖຸນາ 2016, ຖ້າພົບເຫັນມີການກະທຳຜິດ ແມ່ນໃຫ້ດຳເນີນມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008 ແລະກົດໝາຍອື່ນທີ່ກ່ຽວຂ້ອງ;

**5.** ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ໃນການຈັດຕັ້ງປະຕິບັດຕົວຈິງ, ຫາກພົບບັນຫາຫຍຸ້ງຍາກທີ່ບໍ່ສາມາດແກ້ໄຂໄດ້ ໃຫ້ລາຍງານການນຳກະຊວງກະສິກຳ ແລະປ່າໄມ້ ເພື່ອຫາວິທີແກ້ໄຂຢ່າງທັນການ.

**ລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້**

ດຣ. ເພັດ ພົມພິພັກ

<u>ສຳເນົານຳສົ່ງ:</u>

| | | |
|---|---|---|
| 1. | ທ່ານ ຮອງລັດຖະມົນຕີ ທ່ານລະ | 01 ສະບັບ (ເພື່ອຊາບ); |
| 2. | ຫ້ອງວ່າການປົກຄອງແຂວງ, ນວ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊີ້ນຳ); |
| 3. | ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ ບ່ອນລະ | 01 ສະບັບ (ເພື່ອຊາບ); |
| 4. | ຫ້ອງການ ກະຊວງການຕ່າງປະເທດ | 01 ສະບັບ (ເພື່ອຊາບ); |
| 5. | ຫ້ອງການ ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 6. | ຫ້ອງການ ກະຊວງການເງິນ | 01 ສະບັບ (ເພື່ອຊາບ); |
| 7. | ຫ້ອງວ່າການ ກະຊວງປ້ອງກັນຄວາມສະຫງົບ | 01 ສະບັບ (ເພື່ອຊາບ); |
| 8. | ຫ້ອງການ ກະຊວງສາທາລະນະສຸກ | 01 ສະບັບ (ເພື່ອຊາບ); |
| 9. | ສະພາອຸດສາຫະກຳ ແລະ ການຄ້າແຫ່ງຊາດ | 01 ສະບັບ (ເພື່ອຊາບ); |
| 10. | ຂະແໜງປູກຝັງແຂວງ, ນວ ບ່ອນລະ | 01 ສະບັບ (ເພື່ອປະຕິບັດ); |
| 11. | ດ່ານສາກົນ ບ່ອນລະ | 01 ສະບັບ (ເພື່ອຊີ້ນຳ); |
| 12. | ເກັບມ້ຽນ | 01 ສະບັບ |